ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 3082-/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 27 AUG 2024

ໃບລາຍງານ

ຮຽນ: - ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
- ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ເຄົາລົບ,

ເລື່ອງ: ແຈ້ງມະຕິ ທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 3/2024.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ ຄຄຊ, ລົງ ວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາ ບໍລິຫານສະໄໝສາມັນ ຄັ້ງທີ 3/2024 ວັນທີ 26 ສິງຫາ 2024, ມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານການດຳເນີນທຸລະກິດ ລວມທັງລາຍງານການເງິນ ຂອງບໍລິສັດ ປະຈຳ 06 ເດືອນຕົ້ນປີ 2024, ແລະ ໃຫ້ນຳເລື່ອງນີ້ລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ.
2. ອະນຸມັດບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງບໍລິສັດປະຈຳ 06 ເດືອນຕົ້ນປີ 2024. ເນື່ອງຈາກ ບໍລິສັດຍັງມີພັນທະໃນການຊຳລະຮຸ້ນກູ້ ແລະ ເງິນກູ້ ທີ່ຈະຄົບກຳນົດໃນໄຕມາດ 3 ແລະ ໄຕມາດ 4 ປີ 2024 ແລະ ໃຫ້ນຳເລື່ອງນີ້ລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ.
3. ຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່, ອາຍຸການຂອງ ກຳມະການສະພາບໍລິຫານບໍລິສັດ ແລະ ການດັດແກ້ກົດລະບຽບ ຂອງ ບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ສະພາບໍລິຫານ ດັ່ງນີ້:
   1) ແຕ່ງຕັ້ງ ທ່ານ ປອ. ບຸນແທນ ຈັນສະໄໝ ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ ເປັນກຳມະການ ສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ກຳນົດອາຍຸການຂອງກຳມະການສະພາ ບໍລິຫານບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດ ເປັນຕົ້ນໄປ.
   2) ດັດແກ້ກົດລະບຽບຂອງບໍລິສັດ ມາດຕາ 9: ວ່າດ້ວຍກຳມະການສະພາບໍລິຫານ ເພື່ອເພີ່ມ ແລະ ປ່ຽນຊື່-ທີ່ຢູ່ ຂອງກຳມະການສະພາບໍລິຫານຜູ້ໃໝ່ ແລະ ໃຫ້ນຳເລື່ອງດັ່ງກ່າວສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ ຮັບຮອງຕາມລະບຽບການ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ວົງສະກຸນ ຍິ່ງຍົງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ ຕູ້ ປ.ນ 2392, ໂທລະສັບ: **(856-21) 316142** ແຟັກ: **(856-21) 316141.** ອີເມລ: edlgenhq@edlgen.com.la, ເວັບໄຊ: www.edlgen.com.la